# ແຜນພັດທະນາໄລຍະກາງ ແລະ ຍາວ ຊີ້ທິດເຍືອງທາງ ໃຫ້ແກ່ການພັດທະນາຂອງຈີນ ແລະ ລາວ

ວັນທີ 28 ຕຸລາຜ່ານມາ, ຈີນໄດ້ເປີດເຜີຍ "ຂໍ້ສະເໜີຂອງສູນກາງພັກກອມມູນິດຈີນກ່ຽວກັບການວາງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ 15" (ຕໍ່ໄປເອີ້ນຫຍໍ້ວ່າແຜນພັດທະນາ 5 ປີຄັ້ງທີ 15) ຢ່າງເປັນທາງການ; ໃນຂະນະດຽວກັນ, ລາວກໍພວມເລັ່ງລັດວາງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ 10 (ປີ 2026–2030). ແຜນພັດທະນາໄລຍະກາງ ແລະ ຍາວຈະຊີ້ທິດເຍືອງທາງໃຫ້ແກ່ການພັດທະນາຂອງປະເທດໜຶ່ງໃນອະນາຄົດ; ໃນຂະນະດຽວກັນ, ກໍເປັນຄໍາໝັ້ນສັນຍາໃຫ້ແກ່ຄວາມປາຖະໜາຂອງປະຊາຊົນທີ່ມີຕໍ່ຊີວິດທີ່ສຸກສັນ ແລະ ກໍແມ່ນຂົວແຫ່ງໜຶ່ງທີ່ໄດ້ເຊື່ອມຕໍ່ຄວາມຝັນຮ່ວມລະຫວ່າງສອງປະເທດຈີນແລະລາວ. ຈີນ ແລະ ລາວເປັນປະເທດບ້ານໃກ້ເຮືອນຄຽງສັງຄົມນິຍົມທີ່ມີອຸດົມການດຽວກັນ, ແຜນພັດທະນາໄລຍະກາງ ແລະ ຍາວພວມເຮັດໃຫ້ຄວາມປາຖະໜາຮ່ວມຂອງສອງປະເທດກາຍເປັນເປົ້າໝາຍທີ່ຈະແຈ້ງ ແລະ ຜັງວາດການພັດທະນາທີ່ລະອຽດຖີ່ຖ້ວນ.




### ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຈະຊຸກຍູ້ການພັດທະນາເສດຖະກິດ-ສັງຄົມໄດ້ຄືແນວໃດ?

ປີ 2025 ແມ່ນປີສຸດທ້າຍໃນການປະຕິບັດແຜນພັດທະນາ ເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີຄັ້ງທີ 14 ຂອງຈີນ. ຈາກແຜນພັດທະນາ 5 ປີຄັ້ງທີ 1 ຮອດແຜນພັດທະນາ 5 ປີຄັ້ງທີ 14, ຈີນໄດ້ຫັນວິໄສທັດແຫ່ງຊາດໃຫ້ເປັນການເຄື່ອນໄຫວຕົວຈິງຢ່າງບໍ່ຢຸດຢັ້ງ, ດ້ານໜຶ່ງໄດ້ຊຸກຍູ້ໃຫ້ກໍາລັງສັງລວມແຫ່ງຊາດຂອງຈີນໃຫ້ບັນລຸການພັດທະນາແບບກ້າວກະໂດດຂັ້ນ ແລະ ອີກດ້ານໜຶ່ງກໍໄດ້ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນຢ່າງແທ້ຈິງເຊິ່ງໄດ້ບັນລຸ "2 ມະຫັດສະຈັນ" ຄື: ການພັດທະນາເສດຖະກິດຢ່າງວ່ອງໄວ ແລະ ສັງຄົມມີຄວາມສະຖຽນລະພາບເປັນໄລຍະຍາວນານ ໂດຍໄດ້ເພີ່ມຄວາມແນ່ນອນແບບຈີນທີ່ລ້ຳຄ່າໃຫ້ແກ່ໂລກທີ່ເຕັມໄປດ້ວຍຄວາມບໍ່ແນ່ນອນ.

"ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຂອງຈີນແມ່ນການອອກແບບຈາກຂັ້ນສູງສຸດ ແລະ ການຂໍຄວາມເຫັນຈາກປະຊາຊົນປະສານສົມທົບກັນແບບກາຍອິນຊີ." ທ່ານຊຸນຈິ້ງຊິນ ຮອງຫົວໜ້າສະຖາບັນຄົ້ນຄວ້າຈີນ ແລະ ໂລກຮ່ວມສະໄໝ ກ່າວວ່າ: ໂດຍຜ່ານຈາກ "ການຈັດວາງເປົ້າໝາຍມະຫາພາກເປັນໂຄງການລະອຽດ", ແຜນພັດທະນາເສດຖະກິດສັງຄົມສາມາດສິ່ງຕໍ່ມານະຈິດຂອງປະເທດຢ່າງຖືກຕ້ອງແມ່ນຢໍາ.ຕົວຢ່າງຄື: ໃນໄລຍະການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ 13 ແລະ ຄັ້ງທີ 14 ຂອງຈີນ, ຕ່າງໄດ້ຈັດວາງໂຄງການສໍາຄັນ 165 ໂຄງການລະ 102 ໂຄງການພ້ອມທັງໄດ້ສ້າງກົນໄກຕິດຕາມຕະຫຼອດການ.ການອອກແບບດ້ານລະບຽບການແບບນີ້ທີ່ຫັນຍຸດທະສາດການພັດທະນາເປັນຕົວເລກດັດສະນີທີ່ກວດສອບໄດ້, ທັງສາມາດຮັກສາຄວາມຕໍ່ເນື່ອງຂອງນະໂຍບາຍ, ກໍສາມາດປັບປຸງການປະຕິບັດ ໃຫ້ສົມບູນຂຶ້ນຢ່າງຕໍ່ເນື່ອງ, ເຮັດໃຫ້ຈີນສາມາດ "ແຕ້ມຜັງວາດແຫ່ງການພັດທະນາຕະຫຼອດໄປ".

ໃນໄລຍະແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ 15, ຈີນຈະສືບຕໍ່ເສີມຂະຫຍາຍບົດບາດໃນການຮັກສາຄວາມໝັ້ນຄົງທົ່ວໂລກ. ທ່ານ ຊຶ່ງລີ້ລີ້ ຮອງຫົວໜ້າສູນຄົ້ນຄວ້າການຮ່ວມມືເສດຖະກິດການຄ້າ "ໜຶ່ງແລວ ໜຶ່ງເສັ້ນທາງ" ຂອງສະຖາບັນຄົ້ນຄວ້າການຮ່ວມມືເສດຖະກິດ ແລະ ການຄ້າສາກົນ ຂອງກະຊວງການຄ້າຈີນໄດ້ສະເໜີ 3 ຊ່ອງທາງໃຫຍ່ຄື:ຂຸດຄົ້ນຄວາມສາມາດບົ່ມຊ້ອນທີ່ເປັນຕະຫຼາດຂະໜາດໃຫຍ່ພິເສດເພື່ອຕອບສະໜອງຄວາມຕ້ອງການຂອງທົ່ວໂລກ;ສ້າງລະບົບ ເສດຖະກິດການຄ້າຫຼາຍຮູບແບບ ແລະ ມີຄວາມໜຽວແໜ້ນສູງ; ຊຸກຍູ້ການວາງລະບຽບການເສດຖະກິດການຄ້າທີ່ມີມາດຕະຖານສູງໂດຍຜ່ານການຮ່ວມກັນສ້າງ "ໜຶ່ງແລວໜຶ່ງເສັ້ນທາງ" ດ້ວຍຄຸນນະພາບສູງ ແລະ ຜະລິດຕະພັນສາທາລະນະອື່ນໆ.

ຕົວເລກຂໍ້ມູນສະແດງໃຫ້ເຫັນວ່າ: ປີ 1952, ລວມຍອດຜະລິດຕະພັນພາຍໃນ ຫຼື GDP ຂອງຈີນມີພຽງແຕ່ 30 ຕື້ໂດລາເທົ່ານັ້ນ; ປີ 2024, GDP ຂອງຈີນໄດ້ບັນລຸເຖິງ 134.900 ຕື້ຢວນ. ໃນໄລຍະແຜນພັດທະນາ 5 ປີຄັ້ງທີ 14, ຄວາມແຮງດ້ານການລົງທຶນໃນການຄົ້ນຄວ້າພັດທະນາການປະດິດສ້າງໃໝ່ ຂອງ ຈີນ ໄດ້ ເພີ່ມ ຂຶ້ນເປັນ 2,68% ເປັນ "ອັນດັບທີ 1 ຂອງທົ່ວໂລກ" ຫຼາຍປະການເຊັ່ນ: ຈີນໄດ້ຜະລິດກໍາປັ່ນທ່ອງທ່ຽວຂະໜາດໃຫຍ່ລໍາທໍາອິດ, ຈີນໄດ້ສ້າງໂຮງໄຟຟ້ານິວເຄລຍລຸ້ນທີ 4 ແຫ່ງທໍາອິດ ແລະອື່ນໆ. ທ່ານນາງ ຫວາງ ຕ່ານຮອງນັກຄົ້ນຄວ້າສະຖາບັນຄົ້ນຄວ້າຈີນ ແລະ ໂລກຮ່ວມສະໄໝ ກ່າວວ່າ: ຜົນສໍາເລັດເຫຼົ່ານີ້ໄດ້ ພັດທະນາໄປພ້ອມກັນກັບການປັບປຸງຊີວິດການເປັນຢູ່ຂອງປະຊາຊົນເຊັ່ນ:ຈີນໄດ້ສ້າງສູນປິ່ນປົວແຫ່ງຊາດ 114 ແຫ່ງ, ປະຊາກອນຈີນ 400 ລ້ານຄົນໄດ້ຊໍາລະຄ່າປິ່ນປົວພະຍາດຢູ່ຕ່າງແຂວງດ້ວຍປະກັນສຸຂະພາບໂດຍກົງ ແລະ ອື່ນໆເຊິ່ງໄດ້ເປັນແບບຢ່າງໃໝ່ໃນການສ້າງສາຄວາມທັນສະໄໝສໍາລັບປະເທດທີ່ກໍາລັງພັດທະນາ.

### ເຄັດລັບໃນການຫັນຈາກປະເທດບໍ່ມີຊາຍແດນຕິດກັບທະເລມາເປັນປະເທດເຊື່ອມໂຍງເຊື່ອມຈອດຂອງພາກພື້ນ

ເມື່ອສອງປະເທດຈີນ ແລະ ລາວໄດ້ກ້າວເຂົ້າສູ່ໄລຍະວາງແຜນພັດທະນາໃໝ່ຢ່າງພ້ອມພຽງຮຽງໜ້າກັນ, ແຜນພັດທະນາໄລຍະກາງ ແລະ ຍາວຂອງລາວກໍໄດ້ສະແດງໃຫ້ເຫັນເຖິງສະຕິປັນຍາດ້ານການພັດທະນາທີ່ມີເອກະລັກພິເສດຂອງຕົນ.

ທ່ານ ປອ. ວັນໄຊ ໄຊຍະວົງ, ຮອງຫົວໜ້າສະຖາບັນຄົ້ນຄວ້າເສດຖະກິດມະຫາພາກ, ສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດລາວ ກ່າວວ່າ: ນັບແຕ່ໄດ້ກໍານົດທິດທາງ "ປ່ຽນແປງໃໝ່ແລະເປີດປະຕູສູ່ພາຍນອກຢ່າງຮອບດ້ານ" ແຕ່ປີ 1986 ເປັນຕົ້ນມາ, ໂດຍຜ່ານຈາກການປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຢ່າງຕິດຕໍ່ກັນ, ລາວໄດ້ຟື້ນຟູເສດຖະກິດຕະຫຼາດຫຼັງສົງຄາມ ແລະ ລາຍຮັບສະເລ່ຍຕໍ່ຫົວຄົນຂອງລາວໄດ້ເພີ່ມຂຶ້ນຢ່າງເດັ່ນຊັດ.

ຂະບວນການຫັນປ່ຽນຮູບແບບການພັດທະນາດັ່ງກ່າວໄດ້ປະສົບຜົນສໍາເລັດ ຕົວຈິງ. ພຶດຕິກໍາສະແດງໃຫ້ເຫັນວ່າ: ນັບແຕ່ ປີ 1985 ຫາ ປີ 1995, ຈັງຫວະການເຕີບໂຕສະເລ່ຍຕໍ່ປີຂອງເສດຖະກິດລາວໄດ້ບັນລຸເຖິງ 5,5% ໂດຍໄດ້ສູງກວ່າໄລຍະຟື້ນຟູຫຼັງສົງຄາມລະຫວ່າງ ປີ 1975 ຫາ ປີ 1985 ທີ່ເປັນ 2,8%. ລາຍຮັບສະເລ່ຍຕໍ່ຫົວຄົນໄດ້ເພີ່ມຈາກ 363 ໂດລາໃນປີ 1995 ຂຶ້ນເປັນ 1,216 ໂດລາໃນປີ 2010 ແລະ ໄດ້ບັນລຸເຖິງປະມານ 1,872 ໂດລາໃນປີ 2024. ໃນຂະນະດຽວກັນ, ໂຄງປະກອບເສດຖະກິດຂອງລາວກໍໄດ້ຮັບການປັບປຸງໃຫ້ດີຂຶ້ນຢ່າງຕໍ່ເນື່ອງ ແລະ ໄດ້ຫັນຈາກການຖືກະສິກໍາເປັນຕົ້ນຕໍມາເປັນອຸດສາຫະກໍາ ແລະ ການບໍລິການພັດທະນາຢ່າງປະສານສົມທົບກັນ.

ປັດຈຸບັນ, ພັກ ແລະ ລັດຖະບານລາວພວມເລັ່ງການວາງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ 10 (ປີ 2026–2030), ຍຸດທະສາດແຫ່ງການພັດທະນາ 10 ປີຮອບໃໝ່ (ປີ 2026-2035) ແລະ ເປົ້າໝາຍວິໄສທັດປີ 2055 ໂດຍມີຈຸດປະສົງກໍານົດເສັ້ນທາງພັດທະນາແຫ່ງຊາດເມື່ອຮອດປີ 2055.

ທ່ານ ອູ່ສະຫວັນ ທ່ຽງເທບວົງສາ, ຫົວໜ້າສະຖາບັນຄົ້ນຄວ້ານະໂຍບາຍເສດຖະກິດ-ສັງຄົມ, ສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດລາວໄດ້ບັນຍາຍວິໄສທັດແນວທາງຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ 10 ຂອງລາວນັ້ນຄື: ສ້າງ"ລະບົບເສດຖະກິດທັນສະໄໝທີ່ມີຄວາມເອກະລາດ ແລະ ເປັນເຈົ້າຕົນເອງ" ໂດຍໄດ້ສະເໜີ 8 ທິດທາງຍຸດທະສາດ, ເນັ້ນໜັກການຍົກສູງປະສິດທິພາບດ້ານການປົກຄອງດ້ວຍການປະຕິຮູບລະບົບບໍລິຫານ ແລະ ຫັນເປັນແບບດີຈີຕອນພ້ອມທັງລົງເລິກການຮ່ວມມືໃນກົນໄກຫຼາຍຝ່າຍຕ່າງໆ ເຊັ່ນ:ຂໍ້ລິເລີ່ມ "ໜຶ່ງແລວ ໜຶ່ງເສັ້ນທາງ", ກຸ່ມບຣິກສ໌, ອົງການຮ່ວມມືຊຽງໄຮ້ ແລະ ອື່ນໆ, ພະຍາຍາມໃຫ້ບັນລຸເປົ້າໝາຍພັດທະນາແບບຍືນຍົງຂອງອົງການສະຫະປະຊາຊາດກ່ອນປີ 2030.

ຈາກປະເທດບໍ່ມີຊາຍແດນຕິດກັບທະເລກາຍມາເປັນປະເທດ ເຊື່ອມໂຍງເຊື່ອມຈອດຂອງພາກພື້ນ, ໂດຍຜ່ານຈາກການປະຕິບັດແຜນພັດທະນາ 5 ປີຫຼາຍຄັ້ງ, ລາວໄດ້ຂຽນປະຫວັດສາດໜ້າໃໝ່ແຫ່ງການພັດທະນາດ້ວຍການວາງແຜນພັດທະນາເສດຖະກິດ-ສັງຄົມທີ່ເປັນລະບົບ.

ທ່ານ ເກີດຂວັນໃຈ ມາລີຈັນສີ ນັກຂ່າວສໍານັກຂ່າວສານປະເທດລາວ ໄດ້ຍົກຕົວເລກຂໍ້ມູນວ່າ:ນັບແຕ່ການເປີດນໍາໃຊ້ເສັ້ນທາງລົດໄຟລາວ-ຈີນເປັນຕົ້ນມາ, ໄດ້ຂົນສົ່ງຜູ້ໂດຍສານຫຼາຍກວ່າ 60 ລ້ານເທື່ອຄົນ,ໄດ້ນໍາພາການສົ່ງອອກຜະລິດຕະພັນກະສິກໍາ 74 ປະເພດໄປສູ່ຈີນ, ໃນນັ້ນ, ຄາດວ່າ, ປະລິມານການສົ່ງອອກໝາກມ່ວງໃນປີ 2025 ຈະບັນລຸເຖິງ 1,500 ໂຕນ; ຂະແໜງການທ່ອງທ່ຽວຂອງລາວໄດ້ຟື້ນຕົວຢ່າງແຂງແຮງ, ຄາດວ່າຈະມີນັກທ່ອງທ່ຽວຕ່າງປະເທດເຂົ້າມາທ່ຽວລາວຫຼາຍກວ່າ 5 ລ້ານເທື່ອຄົນ. ຜົນສໍາເລັດເຫຼົ່ານີ້ໄດ້ສະແດງໃຫ້ເຫັນວ່າ: ລາວພວມໄດ້ຫັນຄວາມບົກຜ່ອງດ້ານທີ່ຕັ້ງພູມສາດມາເປັນທ່າແຮງດ້ານການພັດທະນາໂດຍຜ່ານຈາກການກໍ່ສ້າງໂຄງການພື້ນຖານໂຄງລ່າງຂະໜາດໃຫຍ່.

(ບົດຈາກ ວາລະສານ ຈໍາປາ)

(ສະໜອງຂໍ້ມູນໂດຍ:ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສຽງໃຕ້ແຂວງຢຸນນານ)

ynzhanba@163.com
laos.yunnangateway.com